# ປ້ອງກັນລູກຂອງທ່ານຈາກໂຄວິດ-19

## ຂໍ້ຄວາມ

[ຈັງຫວະເພັງ]

[ການເລົ່າເລື່ອງ]

ວັກຊີນໂຄວິດ-19 ໄຟເຊີ້ (Pfizer) ແມ່ນປັດຈຸບັນມີສໍາລັບເດັກນ້ອຍທີ່ມີອາຍຸ 5 ເຖິງ 11 ປີ.

ສູນຄວບຄຸມ ແລະ ປ້ອງກັນພະຍາດ ແນະນໍາໃຫ້ເດັກນ້ອຍທີ່ມີສຸຂະພາບແຂງແຮງ, ໄປຮັບຢາວັກຊີນ.

ເດັກນ້ອຍເອງສາມາດເປັນໂຄວິດ-19 ໄດ້, ແລະ ວັກຊີນສາມາດຊ່ວຍປ້ອງກັນພວກເຂົາໃຫ້ມີສຸຂະພາບທີ່ແຂງແຮງ.

ວັກຊີນໂຄວິດ-19 ແມ່ນປອດໄພ, ບໍ່ມີຄ່າໃຊ້ຈ່າຍ, ແລະ ໄດ້ຜົນກັບເດັກນ້ອຍ.

ວັກຊີນສໍາລັບເດັກນ້ອຍ 5 ຫາ 11 ປີ ແມ່ນມີປະລິມານວັກຊີນໜ້ອຍກວ່າ ຖ້າທຽບກັບ ວັກຊີນໄຟເຊີ້ (Pfizer) ສໍາລັບຄົນທີ່ມີອາຍຸ 12 ປີຂຶ້ນໄປ.

ປະລິມານຢາຈະໜ້ອຍກວ່າ ການຫຸ້ມຫໍ່ແມ່ນແຕກຕ່າງກັນ, ດັ່ງນັ້ນ ທ່ານສາມາດໄປສະຖານທີ່ສັກຢາວັກຊີນ ທີ່ມີວັກຊີນນີ້.

ວັກຊີນໂຄວິດ-19 ຈະບໍ່ເຮັດໃຫ້ເຈັບປ່ວຍ.

ວັກຊີນໂຄວິດ-19 ປ້ອງກັນຫຼາຍໆຄອບຄົວຈາກການເປັນໂຄວິດ-19.

ລູກຂອງທ່ານຈະຕ້ອງໄດ້ຮັບ ວັກຊີນໂຄວິດ-19 ສອງເຂັມ ໃນການປ້ອງກັນທີ່ດີທີ່ສຸດ.

ເຂັມທີໜຶ່ງ ແລະ ເຂັມທີສອງ ແມ່ນສັກຫ່າງກັນ 3 ອາທິດ.

ລູກຂອງທ່ານຈະໄດ້ຮັບການປ້ອງກັນທີ່ຄົບຖ້ວນ ສອງອາທິດຫຼັງຈາກທີ່ໄດ້ສັກເຂັມທີສອງ.

ລົມກັບຜູ້ໃຫ້ບໍລິການປິ່ນປົວສຸຂະພາບ ຖ້າທ່ານມີຄໍາຖາມ.

ແລະ ສາຍດ່ວນ MDH ທີ່ໝາຍເລກ 1-833-431-2053.

[ຈັງຫວະເພັງ]

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

11/16/21 (Lao)

ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989